ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ໜໜໜໜໜ***ໜໜໜໜ

ນາຍົກລັດຖະມົນຕີ ເລກທີ 245 / ນຍ

ນະຄອນຫຼວງວຽງຈັນ, ວັນທີ 16.08.2011

# ດຳລັດ

# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ

# ຂອງອົງການກວດກາລັດຖະບານ

- ອີງຕາມລັດຖະທຳມະນູນແຫ່ງ ສປປລາວ ແລະ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມກົດໝາຍວ່າດ້ວຍການກວດກາລັດ ແລະ ກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫລວງ;
- ອີງຕາມການສະເໜີ ຂອງກະຊວງພາຍໃນ ສະບັບເລກທີ10 /ພນ, ລົງວັນທີ 5 ສິງຫາ 2011.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ I

## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ດຳລັດສະບັບນີ້ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ ຂອງອົງການກວດກາລັດຖະບານ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການດັ່ງກ່າວ ແນ່ໃສ່ເຮັດໃຫ້ການເຄື່ອນໄຫວວຽກງານກວດກາໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

**ມາດຕາ 2. ທີ່ຕັ້ງ**

ອົງການກວດກາລັດຖະບານຂຽນຫຍໍ້ (ອກລ) ແມ່ນອົງການກວດກາລັດຂັ້ນສູນກາງ, ມີຖານະທຽບເທົ່າກະຊວງ ແລະ ຢູ່ໃນໂຄງປະກອບກົງຈັກຂອງລັດຖະບານ.

**ມາດຕາ 3. ພາລະບົດບາດ**

3.1. ເປັນເສນາທິການ ແລະຮັບຜິດຊອບຕໍ່ລັດຖະບານກ່ຽວກັບການກວດກາລັດ, ສະກັດກັ້ນ ຕ້ານການສໍ້ລາດບັງຫຼວງ ແລະ ຄົ້ນຄວ້າພິຈາລະນາຄຳຮ້ອງ-ຄຳສະເໜີ ຂອງພົນລະເມືອງ ໃນຂອບເຂດໜ້າທີ່ ແລະ ສິດ ຂອງລັດຖະບານ ຕາມກົດໝາຍໄດ້ກຳນົດ;

3.2. ຊີ້ນຳວຽກງານວິຊາສະເພາະກວດກາລັດ, ສະກັດກັ້ນຕ້ານການສໍ້ລາດບັງຫຼວງ, ຄົ້ນຄວ້າຄຳຮ້ອງ-ຄຳສະເໜີ ຂອງພົນລະເມືອງ, ການປັບປຸງກົງຈັກການຈັດຕັ້ງ, ບຳລຸງ-ກໍ່ສ້າງພະນັກງານກວດກາໃນຂອບເຂດທົ່ວປະເທດ;

3.3. ພົວພັນ, ຮ່ວມມືກັບຕ່າງປະເທດ ແລະ ການຈັດຕັ້ງສາກົນກ່ຽວກັບວຽກງານກວດກາລັດ ການສະກັດກັ້ນຕ້ານການສໍ້ລາດບັງຫຼວງ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 4. ໜ້າທີ່**

ອົງການກວດກາລັດຖະບານ ມີໜ້າທີ່ດັ່ງນີ້:

4.1 ຄົ້ນຄວ້າ ຍຸດທະສາດ ແລະ ນິຕິກຳ ກ່ຽວກັບວຽກງານກວດກາລັດ, ຕ້ານການສໍ້ລາດບັງຫຼວງ ແລະ ການແກ້ໄຂຄຳຮ້ອງ-ຄຳສະເໜີ ຂອງພົນລະເມືອງເພື່ອສະເໜີລັດຖະບານພິຈາລະນາ;

4.2 ຄົ້ນຄວ້າ ແລະ ຜັນຂະຫຍາຍນະໂຍບາຍ, ດຳລັດ, ຄຳສັ່ງ, ແຈ້ງການ, ແຜນງານ ຂອງລັດຖະບານມາເປັນແຜນການ, ແຜນງານ ແລະ ໂຄງການລະອຽດເພື່ອຈັດຕັ້ງປະຕິບັດ;

4.3 ໂຄສະນາ ເຜີຍແຜ່ນະໂຍບາຍ, ກົດໝາຍ, ແຈ້ງການ, ຄຳສັ່ງ ແລະ ບົດແນະນຳກ່ຽວກັບວຽກງານກວດກາລັດ, ສະກັດກັ້ນຕ້ານການສໍ້ລາດບັງຫຼວງ ແລະ ຄົ້ນຄວ້າພິຈາລະນາຄຳຮ້ອງ-ຄຳສະເໜີ ຂອງພົນລະເມືອງ;

4.4 ຕິດຕາມ ການປະຕິບັດກົດໝາຍ, ຂໍ້ຕົກລົງ, ຄຳສັ່ງ, ແຜນການ, ໜ້າທີ່-ສິດ, ຄວາມຮັບຜິດຊອບ ຂອງກະຊວງ-ອົງການ, ນະຄອນຫຼວງ, ແຂວງ ແລະ ການປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນ ຂັ້ນສູນກາງຄຸ້ມຄອງ;

4.5 ກວດກາ ເມື່ອມີປະກົດການລະເມີດກົດໝາຍ ໃນການປະຕິບັດໜ້າທີ່ ຂອງການຈັດຕັ້ງລັດ ແລະ ພະນັກງານ-ລັດຖະກອນ ຂັ້ນສູນກາງຄຸ້ມຄອງ;

4.6 ຕິດຕາມ, ກວດກາການບໍລິຫານລັດ, ການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ການຄຸ້ມຄອງນຳໃຊ້ຊັບສິນ, ການກໍ່ສ້າງພື້ນຖານໂຄງລ່າງ, ການນຳໃຊ້ທຶນກູ້ຢືມ, ທຶນຊ່ວຍເຫຼືອລ້າ ແລະ ກອງທຶນຕ່າງໆ ຂອງບັນດາກະຊວງ-ອົງ

ການທຽບເທົ່າກະຊວງ, ນະຄອນຫຼວງ, ແຂວງ ແລະ ບັນດາການຈັດຕັ້ງ ທີ່ຂຶ້ນກັບສູນກາງໂດຍກົງ;

4.7 ຄົ້ນຄວ້າພິຈາລະນາຄໍາຮ້ອງ-ຄໍາສະເໜີ ຂອງພົນລະເມືອງ ກ່ຽວກັບການກະທໍາ ຫຼື ການຕົກລົງບັນຫາໃດໜຶ່ງທີ່ລະເມີດມະຕິ, ຄໍາສັ່ງ, ລະບຽບການ ຂອງການຈັດຕັ້ງ ແລະ ພະນັກງານຂັ້ນສູນກາງຄຸ້ມຄອງ; ຄົ້ນຄວ້າພິຈາລະນາຄໍາຮ້ອງ-ຄໍາສະເໜີ ທີ່ກະຊວງ- ອົງການທຽບເທົ່າກະຊວງ, ນະຄອນຫຼວງ, ແຂວງໄດ້ແກ້ໄຂແລ້ວ ແຕ່ພົນລະເມືອງຜູ້ນັ້ນ ເຫັນວ່າຍັງບໍ່ທັນເໝາະສົມ;

4.8 ຕິດຕາມ, ກວດກາ ສະກັດກັ້ນຕ້ານການສໍ້ລາດບັງຫຼວງ ຢູ່ໃນອົງການບໍລິຫານລັດຂັ້ນສູນກາງ, ນະຄອນຫຼວງ, ແຂວງ, ລັດວິສາຫະກິດ, ລັດວິສາຫະກິດປະສົມ, ລັດຫຸ້ນສ່ວນ ແລະ ພະນັກງານ ທີ່ຂຶ້ນກັບສູນກາງຄຸ້ມຄອງ;

4.9 ຕິດຕາມ, ກວດກາ ການແຈ້ງຊັບສິນ, ໜີ້ສິນ, ລາຍຮັບ-ລາຍຈ່າຍ ຂອງພະນັກງານຂັ້ນສູນກາງຄຸ້ມຄອງ ຕາມລະບຽບການທີ່ໄດ້ກໍານົດ;

4.10 ດໍາເນີນການສືບສວນ-ສອບສວນຄະດີສໍ້ລາດບັງຫຼວງ, ສະຫລຸບ ແລະ ປະກອບສໍານວນຄະດີສົ່ງໃຫ້ໄອຍະການປະຊາຊົນພິຈາລະນາ ຕາມທີ່ໄດ້ກໍານົດໃນກົດໝາຍ;

4.11 ສະຫຼຸບສັງລວມ, ລາຍງານສະພາບການເຄື່ອນໄຫວວຽກງານກ່ຽວກັບການກວດກາລັດ, ສະກັດກັ້ນຕ້ານການສໍ້ລາດບັງຫຼວງ, ການພິຈາລະນາຄໍາຮ້ອງ-ຄໍາສະເໜີ ຂອງພົນລະເມືອງ ແລະ ຜົນຂອງການກວດກາ ໃຫ້ນາຍົກລັດຖະມົນຕີ ແລະ ຄະນະປະຈໍາສະພາແຫ່ງຊາດ;

4.12 ສະເໜີສ້າງ ຫຼື ປັບປຸງກົດໝາຍ, ດໍາລັດ ແລະນິຕິກໍາຕ່າງໆ ກ່ຽວກັບວຽກງານກວດກາລັດ, ຕ້ານການສໍ້ລາດບັງຫຼວງ ແລະ ການຄົ້ນຄວ້າ ພິຈາລະນາ ຄໍາຮ້ອງ-ຄໍາສະເໜີ ຂອງພົນລະເມືອງ ຕໍ່ລັດຖະບານ ເພື່ອພິຈາລະນາ ແລະ ຕົກລົງ;

4.13 ຊີ້ນໍາ, ຕິດຕາມ, ກວດກາ ແລະ ຊຸກຍູ້ອົງການປົກຄອງ, ຄະນະກວດກາລັດຢູ່ຂັ້ນກະຊວງ-ອົງການທຽບເທົ່າກະຊວງ, ນະຄອນຫຼວງ, ແຂວງ ໃນການຈັດຕັ້ງປະຕິບັດວຽກງານກວດກາລັດ, ສະກັດກັ້ນຕ້ານການສໍ້ລາດບັງຫຼວງ ແລະ ການຄົ້ນຄວ້າຄໍາຮ້ອງຄໍາສະເໜີ ຂອງພົນລະເມືອງ;

4.14 ຄົ້ນຄວ້າ ແລະ ສະເໜີຕໍ່ນາຍົກລັດຖະມົນຕີ ພິຈາລະນາຕົກລົງ ກ່ຽວກັບການສ້າງຕັ້ງ, ຍຸບເລີກກົງຈັກການຈັດຕັ້ງ; ການແຕ່ງຕັ້ງ, ຍົກຍ້າຍ, ເລື່ອນຂັ້ນ, ຍ້ອງຍໍ, ລົງວິໄນ ແລະ ອື່ນໆ ຕໍ່ພະນັກງານກວດກາ;

4.15 ສຶກສາອົບຮົມ, ຄຸ້ມຄອງ, ບໍາລຸງ-ກໍ່ສ້າງ, ນໍາໃຊ້ ແລະ ປະຕິບັດນະໂຍບາຍ ຕໍ່ພະນັກງານ-ລັດຖະກອນ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ;

4.16 ຄົ້ນຄວ້າສ້າງແຜນງົບປະມານປະຈໍາປີ, ສະເໜີດັດແກ້ງົບປະມານ, ອອກຂໍ້ກໍານົດຕ່າງໆ ໃນການຄຸ້ມຄອງ, ບໍລິຫານ, ນໍາໃຊ້ງົບປະມານ, ພາຫະນະ, ອຸປະກອນ ແລະ ຊັບສິນຕ່າງໆ ຂອງອົງການຕົນໃຫ້ຖືກຕ້ອງຕາມກົດໝາຍ;

4.17 ພົວພັນຮ່ວມມື ກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບວຽກງານກວດກາລັດ, ການສະກັດກັ້ນ ຕ້ານການສໍ້ລາດບັງຫຼວງ ແລະ ປະຕິບັດສົນທິສັນຍາ, ສັນຍາທີ່ໄດ້ເຊັນກັນແລ້ວ;

4.18 ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ ຂອງນາຍົກລັດຖະມົນຕີ, ຄະນະປະຈຳສະພາແຫ່ງຊາດ ແລະ ຕາມທີ່ໄດ້ກຳນົດໃນກົດໝາຍ.

**ມາດຕາ 5. ຂອບເຂດສິດ**

ອົງການກວດກາລັດຖະບານ ມີສິດດັ່ງນີ້:

5.1 ສະເໜີຂັ້ນເທິງຕົກລົງດຳເນີນການກວດກາ ອົງການບໍລິຫານລັດຂັ້ນສູນກາງ, ນະຄອນຫຼວງ, ແຂວງ, ລັດວິສາຫະກິດ ແລະ ດຳເນີນການກວດກາ ພະນັກງານ-ລັດຖະກອນ ທີ່ຂຶ້ນກັບສູນກາງຄຸ້ມຄອງໃນເມື່ອມີປະກົດການລະເມີດ ກົດໝາຍ, ດຳລັດ, ຂໍ້ຕົກລົງ, ຄຳສັ່ງ, ແຈ້ງການ ແລະ ນິຕິກຳຕ່າງໆ ຂອງລັດຖະບານ;

5.2 ສະເໜີຕໍ່ກະຊວງ, ອົງການທຽບເທົ່າກະຊວງ, ນະຄອນຫຼວງ ແລະ ແຂວງ ໃຫ້ພິຈາລະນາປັບປຸງແກ້ໄຂ ຫຼື ລົບລ້າງເນື້ອໃນຂໍ້ຕົກລົງ, ຄຳສັ່ງ ແລະ ນິຕິກຳອື່ນໆ ທີ່ຂັ້ນດັ່ງກ່າວວາງອອກ ເມື່ອເຫັນວ່າບໍ່ສອດຄ່ອງກັບກົດໝາຍ;

5.3 ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການກ່ຽວກັບວຽກງານກວດກາລັດ, ສະກັດກັ້ນຕ້ານການສໍ້ລາດບັງຫຼວງ ແລະ ຄົ້ນຄວ້າຄຳຮ້ອງ-ຄຳສະເໜີ ຂອງພົນລະເມືອງ;

5.4 ຮຽກເຊີນເປົ້າໝາຍທີ່ຖືກກວດກາ, ການຈັດຕັ້ງທີ່ກ່ຽວຂ້ອງ, ພະຍານ, ຊ່ຽວຊານ, ຜູ້ຍື່ນຄຳຮ້ອງ-ຄຳສະເໜີ ມາລາຍງານ, ໃຫ້ຄຳຊີ້ແຈງ, ອະທິບາຍພ້ອມທັງປະກອບເອກະສານຫຼັກຖານ ຫຼື ຂໍ້ມູນທີ່ກ່ຽວຂ້ອງກັບການກວດກາ;

5.5 ທວງເອົາເອກະສານຫຼັກຖານ ແລະ ຂໍ້ມູນຕ່າງໆ ກ່ຽວກັບການກວດກາຈາກບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ;

5.6 ສະເໜີໂຈະຊົ່ວຄາວການແຕ່ງຕັ້ງ, ສັບຊ້ອນ, ການຍົກຍ້າຍ ຫຼື ການປະຕິບັດໜ້າທີ່ຂອງຜູ້ທີ່ຖືກກວດກາ ໃນເວລາການກວດກາບໍ່ທັນສຳເລັດ ຫຼື ເຫັນວ່າຈະມີຜົນກະທົບ ແລະ ສ້າງຄວາມຫຍຸ້ງຍາກ ໃຫ້ແກ່ການກວດກາ;

5.7 ຕິດຕາມ, ກວດກາ, ຊຸກຍູ້ ເພື່ອຮັບປະກັນໃຫ້ຄຳຕັດສິນ ຂອງສານກ່ຽວກັບຄະດີສໍ້ລາດບັງຫຼວງ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເຂັ້ມງວດ;

5.8 ຄົ້ນຄວ້ານຳສະເໜີ ນາຍົກລັດຖະມົນຕີ, ຄະນະປະຈຳສະພາແຫ່ງຊາດ ແຕ່ງຕັ້ງຄະນະສະເພາະກິດ ເພື່ອດຳເນີນການກວດກາບັນຫາໃດໜຶ່ງທີ່ມີຄວາມສັບສົນ ແລະ ມີການພົວພັນເຖິງຫຼາຍກະຊວງ-ອົງການທຽບເທົ່າກະຊວງ, ນະຄອນຫຼວງ ແລະ ແຂວງ;

5.9 ພິຈາລະນາ, ຕົກລົງ ແລະ ນຳໃຊ້ມາດຕະການຕ່າງໆ ຕໍ່ຜູ້ທີ່ຖືກກວດກາຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

5.10 ສະຫຼຸບຕີລາຄາຜົນ ຂອງການກວດກາ ແລະ ສະເໜີຮູບການ, ມາດຕະການການແກ້ໄຂຕໍ່ອົງການຈັດຕັ້ງທີ່ກ່ຽວຂ້ອງ ພິຈາລະນາ ຕາມລະບຽບກົດໝາຍ;

5.11 ສະເໜີລຶບລ້າງ ຫຼື ປ່ຽນແປງກ່ຽວກັບການກະທຳ ຫຼື ການຕົກລົງໃດໜຶ່ງ ຂອງການຈັດຕັ້ງລັດ, ພະນັກງານ ທີ່ສູນກາງຄຸ້ມຄອງ ເມື່ອເຫັນວ່າລະເມີດລະບຽບກົດໝາຍ;

5.12 ອອກຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກກວດກາລັດນະຄອນຫຼວງ, ແຂວງ, ຫ້ອງການກວດກາລັດເມືອງ ແລະເທດສະບານ;

5.13 ສະເໜີ ໃຫ້ກະຊວງ, ອົງການທຽບເທົ່າກະຊວງ, ນະຄອນຫຼວງ, ແຂວງ ໂຈະການປະຕິບັດ ຫຼື ໃຫ້ພິຈາລະນາຄືນໃໝ່ ກ່ຽວກັບການຕົກລົງແກ້ໄຂຜົນ ຂອງການກວດກາ ທີ່ເຫັນວ່າ ບໍ່ຖືກຕ້ອງສອດຄ່ອງກັບກົດໝາຍ;

5.14 ດຳເນີນການສືບສວນ-ສອບສວນ ກ່ຽວກັບຄະດີສໍ້ລາດບັງຫຼວງ ໂດຍນຳໃຊ້ມາດຕະການຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

5.15 ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງຫົວໜ້າພະແນກ, ຮອງຫົວໜ້າພະແນກກວດກາລັດແຂວງ, ນະຄອນ, ຫົວໜ້າຫ້ອງການກວດກາລັດເມືອງ ແລະ ເທດສະບານ ຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍ;

5.16 ປະທານ, ຮອງປະທານ ຫຼື ຜູ້ຕາງໜ້າ ອົງການກວດກາລັດຖະບານ ມີສິດເຂົ້າຮ່ວມຕິດຕາມຊີ້ນຳກອງປະຊຸມ ວຽກງານກວດກາ ຂັ້ນກະຊວງ-ອົງການທຽບເທົ່າກະຊວງ, ນະຄອນຫຼວງ ແລະ ແຂວງ;

5.17 ເຊັນບົດບັນທຶກການຮ່ວມມືກັບຕ່າງປະເທດ ແລະ ການຈັດຕັ້ງສາກົນກ່ຽວກັບວຽກງານກວດກາລັດ, ສະກັດກັ້ນຕ້ານການສໍ້ລາບັງຫຼວງ, ຕາມການມອບໝາຍ ຂອງລັດຖະບານ;

5.18 ປະຕິບັດສິດອື່ນໆ ຕາມການມອບໝາຍ ຂອງນາຍົກລັດຖະມົນຕີ, ຄະນະປະຈຳສະພາແຫ່ງຊາດ ແລະ ຕາມທີ່ໄດ້ກຳນົດໃນກົດໝາຍ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

**ມາດຕາ 6. ໂຄງປະກອບກົງຈັກ.**

ໂຄງປະກອບກົງຈັກ ຂອງອົງການກວດກາລັດຖະບານ ປະກອບດ້ວຍ:

6.1 ຂັ້ນສູນກາງ:

1. ຫ້ອງການ;
2. ກົມຈັດຕັ້ງພັກ-ພະນັກງານ;
3. ກົມຄົ້ນຄວ້າ ແລະ ວາລະສານກວດກາ;
4. ກົມຄົ້ນຄວ້າຄຳຮ້ອງ ແລະ ຄຳສະເໜີ;
5. ກົມກວດກາລັດ ອ້ອມຂ້າງສູນກາງ;
6. ກົມກວດກາລັດ ທ້ອງຖິ່ນ;
7. ກົມກວດກາຕ້ານການສໍ້ລາດບັງຫຼວງ;
8. ກົມພົວພັນຕ່າງປະເທດ.

6.2 ຂັ້ນທ້ອງຖິ່ນ:

1. ພະແນກກວດກາລັດຂັ້ນແຂວງ
2. ຫ້ອງການກວດກາລັດຂັ້ນເມືອງ

**ມາດຕາ 7. ໂຄງປະກອບບຸກຄະລາກອນ**

ໂຄງກະກອບບຸກຄະລາກອນ ຂອງອົງການກວດກາລັດຖະບານ ປະກອບດ້ວຍ:

7.1 ອົງການກວດກາລັດຖະບານ ປະກອບມີປະທານ 01 ທ່ານ ຊຶ່ງໄດ້ຮັບຮອງຈາກສະພາແຫ່ງຊາດ ຕາມການສະເໜີຂອງ ນາຍົກລັດຖະມົນຕີ ແລະ ມີຮອງປະທານຈຳນວນໜຶ່ງ ຊຶ່ງໄດ້ຮັບການແຕ່ງຕັ້ງ ຈາກນາຍົກລັດຖະມົນຕີ ຕາມການສະເໜີ ຂອງປະທານອົງການກວດກາລັດຖະບານ;

7.2 ອົງການກວດກາລັດຖະບານປະກອບມີ: ຫົວໜ້າ, ຮອງຫົວໜ້າຫ້ອງການ, ຫົວໜ້າ-ຮອງຫົວໜ້າກົມ, ຫົວໜ້າ-ຮອງຫົວໜ້າພະແນກ ແລະ ພະນັກງານ- ລັດຖະກອນຈຳນວນໜຶ່ງ ຕາມຄວາມຕ້ອງການຕົວຈິງ ຂອງວຽກງານ;

7.3 ຢູ່ຂັ້ນທ້ອງຖິ່ນປະກອບມີ: ຫົວໜ້າ ແລະ ຮອງຫົວໜ້າພະແນກກວດກາລັດປະຈຳແຂວງ, ນະຄອນ; ຫົວໜ້າ, ຮອງຫົວໜ້າຫ້ອງການປະຈຳເມືອງ, ເທດສະບານ ແລະ ພະນັກງານວິຊາການຈຳນວນ ເພື່ອປະກອບເຂົ້າໃນຕຳແໜ່ງຕ່າງໆ ຕາມຄວາມເໝາະສົມ.

## ໝວດທີ IV
## ລະບອບແບບແຜນວິທີເຮັດວຽກ

**ມາດຕາ 8. ຫຼັກການລວມ**

**ອົງການກວດກາລັດຖະບານເຄື່ອນໄຫວຕາມຫລັກການດັ່ງນີ້:**

8.1 ເຄື່ອນໄຫວວຽກງານ ຕາມລະບຽບກົດໝາຍ ຂອງລັດ, ຮັບຜິດຊອບຜົນໄດ້ ຜົນເສຍ ຕໍ່ຄະນະກວດກາສູນກາງພັກ, ລັດຖະບານ ແລະ ຄະນະ ປະຈຳສະພາແຫ່ງຊາດ;

8.2 ເຮັດວຽກຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ, ແບ່ງວຽກໃຫ້ບຸກຄົນຮັບຜິດຊອບ ແລະ ປະຕິບັດລະບອບຫົວໜ້າດຽວ;

8.3 ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ, ມີການກຳນົດ ຫຼືແກ້ໄຂວຽກຢ່າງມີຈຸດສຸມ, ມີຈຸດທົດລອງ ແລະ ມີເປົ້າໝາຍແຕ່ລະໄລຍະ;

8.4 ເຮັດວຽກມີການກວດກາ-ຕິດຕາມຊຸກຍູ້, ສະຫຼຸບ, ປະເມີນຜົນ ແລະ ຖອດຖອນບົດຮຽນຢ່າງເປັນປົກກະຕິ;

8.5 ປະສານສົມທົບ ກັບອົງການກວດກາຂັ້ນຕ່າງໆ, ໄອຍະການປະຊາຊົນ, ບັນດາກະຊວງ-ອົງການທຽບເທົ່າກະຊວງ ແລະ ທ້ອງຖິ່ນ;

8.6 ປະຕິບັດລະບອບລາຍງານ, ຂໍຄຳເຫັນຈາກນາຍົກ ລັດຖະມົນຕີ, ຄະນະປະຈຳສະພາແຫ່ງຊາດ ເປັນປົກກະຕິ; ກໍລະນີມີບັນຫາຮີບດ່ວນ ກໍລາຍງານຂໍທິດຊີ້ນຳໃຫ້ທັນເວລາ;

8.7 ອົງການກວດກາລັດຖະບານ ປະຕິບັດລະບອບດຳເນີນຊີວິດເປັນປົກກະຕິ, ດຳເນີນກອງປະຊຸມວຽກງານກວດກາທົ່ວປະເທດປີລະ 01 ເທື່ອ; ຈັດກອງປະຊຸມຄະນະເດືອນລະເທື່ອ ແລະ ໃນກໍລະນີມີວຽກຈຳເປັນຮີບດ່ວນ ສາມາດຈັດກອງປະຊຸມວິສາມັນໄດ້.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 9. ງົບປະມານ ແລະ ກາປະທັບ**

9.1 ອົງການກວດກາລັດຖະບານ ມີງົບປະມານ (ງົບປະມານຂັ້ນໜຶ່ງ) ຮ່ວມກັບຄະນະກວດກາສູນກາງພັກ ແລະ ມີງົບປະມານຮອງຮັບ ກໍລະນີເຄື່ອນໄຫວຕາມຄຳສັ່ງຂັ້ນເທິງ;

9.2 ອົງການກວດກາລັດຖະບານ, ຫ້ອງການ, ບັນດາກົມ, ພະແນກກວດກາລັດຂັ້ນແຂວງ ຫ້ອງການກວດກາລັດຂັ້ນເມືອງ ມີກາປະທັບຂອງຕົນ ເພື່ອນຳໃຊ້ເຂົ້າໃນວຽກງານທາງລັດຖະການ.

**ມາດຕາ 10. ການຜັນຂະຫຍາຍ**

ມອບໃຫ້ປະທານອົງການກວດກາລັດຖະບານ ເປັນຜູ້ກຳນົດກ່ຽວກັບພາລະບົດບາດ, ຂອບເຂດສິດ, ໜ້າທີ່ ແລະ ໂຄງປະກອບການຈັດຕັ້ງຂອງຫ້ອງການ, ບັນດາກົມ, ພະແນກກວດກາລັດຂັ້ນແຂວງ ແລະ ຫ້ອງການກວດກາລັດຂັ້ນເມືອງ;

**ມາດຕາ 11. ການຈັດຕັ້ງປະຕິບັດ**

ອົງການກວດກາລັດຖະບານ, ບັນດາກະຊວງ, ອົງການທຽບເທົ່າ, ອົງການປົກຄອງທ້ອງຖິ່ນ ຂັ້ນຕ່າງໆ ແລະ ພາກສ່ວນກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດ ສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 12. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດຳລັດ ສະບັບເລກທີ 195/ນຍ, ລົງວັນທີ 21 ສິງຫາ 2006, ລະບຽບການໃດ ທີ່ປະກາດໃຊ້ໃນເມື່ອກ່ອນ ຫາກມີເນື້ອໃນຂັດກັບດຳລັດສະບັບນີ້ລ້ວນແຕ່ຖືກຍົກເລີກ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**

**ທອງສິງ ທຳມະວົງ**